ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ 4010..../ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ .........26 DEC 2025.....

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ຕົວແທນຈຳໜ່າຍພາຫະນະ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ພາຫະນະ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ຊາບວ່າ ທຄຕລ ມີຄວາມຕ້ອງການພາຫະນະ ຈຳນວນ 01 ຄັນ, ສະນັ້ນ ຈຶ່ງແຈ້ງມາທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນ ດັ່ງມີລາຍການລຸ່ມນີ້:

| ລ/ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1 | ລົດໄຟຟ້າ ຍີ່ຫໍ້ Volkswagen ລຸ້ນ ID4 (Cross) ສີຂາວ. | 01 ຄັນ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍພາຫະນະ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **ເອກະສານ ຊອງທີ1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍພາຫະນະ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023-2024, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ) ແລະ ຕ້ອງມີ ສູນບໍລິການ ຫຼັງການຂາຍ.
2. ກຳນົດສົ່ງເອກະສານ, ລາຍລະອຽດສະເປັກລົດ, ການຮັບປະກັນສິນຄ້າ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ສົ່ງກ່ອນ **ວັນສຸກ, ທີ 09/01/2026 ເວລາ 11:00** ໂດຍການສົ່ງຟາຍ PDF ເຂົ້າ E-mail: procurement@bcel.com.la

❖ **ເອກະສານ ຊອງທີ2: (ປິດຊອງ)**

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນພຸດ, ທີ **21/01/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.



ຕິດຕໍ່ພົວພັນ: ຂະແໜງສະໜອງວັນຖຸເຕັກນິກ213200 ຕໍ່ 214

2.3 ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄ້ຳປະກັນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 31/03/2026) ຫຼື ແຊັກທີ່ວີຊ່າແລ້ວ ທີ່ ອອກໂດຍ ທຄຕລ ເທົ່ານັ້ນ, ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄ້ຳປະກັນ ດັ່ງກ່າວ ຄືນ ໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນ ຈະສົ່ງຄືນຫຼັງຈາກ ທີ່ຜູ້ສະໜອງ ຈັດສົ່ງລົດໃຫ້ ທຄຕລ ຖືກຕ້ອງຄົບຖ້ວນ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄ້ຳປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

❖ **<u>ໝາຍເຫດ:</u>**

ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ ແລະ ການຄັດເລືອກຜູ້ສະໜອງແມ່ນ ຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ **<u>ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:</u>**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນິນທະລາດ ແກ້ວປະເສີດ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ໃບອະນຸຍາດເປັນຕົວແທນ | ສູນບໍລິການຫຼັງການຂາຍ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | .... ປີ | (ໃຫ້ລະບຸ) | ☐ ມີ<br>☐ ບໍ່ມີ | .... ປີ | ...... | (ຖ້າມີຂອງແຖມແມ່ນໃຫ້ລະບຸເລີຍ ເຊັ່ນ: ປະກັນໄພ, ຕິດຟິມ,ຮອງແບັດເຕີລີ້ ອື່ນໆ .......) |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .............................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: